# ການຂະຫຍາຍ Apple Health ໃນເດືອນກໍລະກົດ 2024

## ການເພີ່ມຂະຫຍາຍ Apple Health ແມ່ນຫຍັງ?

ງົບປະມານເສີມສໍາລັບສົກປີ 2022 ໄດ້ກໍານົດທິດທາງໃຫ້ອົງການດູແລສຸຂະພາບ (HCA) ພັດທະນາໂຄງການຊ່ວຍເຫຼືອທາງການແພດທີ່ຈະໃຫ້ການຄຸ້ມຄອງການດູແລສຸຂະພາບທຽບເທົ່າຂອງ Medicaid ແກ່ຜູ້ໃຫຍ່ທີ່ບໍ່ມີປະກັນໄພ ແລະ ບໍ່ເຂົ້າເກນເງື່ອນໄຂຄົນເຂົ້າເມືອງສໍາລັບການຊ່ວຍເຫຼືອຂອງລັດຖະບານກາງ.

### ຜູ້ໃດມີສິດ?

ທ່ານອາດມີສິດສໍາລັບໂຄງການນີ້ ຖ້າທ່ານ:

- ເປັນຜູ້ຢູ່ອາໄສໃນລັດວໍຊິງຕັນທີ່ມີອາຍຸ 19 ປີຂຶ້ນໄປ,
- ມີລາຍໄດ້ທີ່ສາມາດຄໍານວນໄດ້ຕໍ່າກວ່າ 138% ຂອງລະດັບຄວາມທຸກຍາກທີ່ລັດຖະບານກາງກໍານົດ,
- ບໍ່ເຂົ້າເກນເງື່ອນໄຂສໍາລັບໂຄງການອື່ນໆຂອງ Apple Health ອີງໃສ່ສະຖານະການເຂົ້າເມືອງ,
- ບໍ່ຖືພາ ຫຼື ບໍ່ມີພາວະຖືພາໃນຊ່ວງ 12 ເດືອນທີ່ຜ່ານມາ ແລະ
- ບໍ່ມີສິດສໍາລັບແຜນປະກັນສຸຂະພາບທີ່ມີຄຸນສົມບັດພ້ອມກັບເຄຣດິດອາກອນພຣີມ້ຽມລ່ວງໜ້າ (APTC) ຫຼື ໂຄງການຊ່ວຍເຫຼືອທາງການແພດທີ່ສະໜອງທຶນຈາກລັດຖະບານກາງ.

ຮຽນຮູ້ກ່ຽວກັບເງື່ອນໄຂສິດສໍາລັບໂຄງການອື່ນໆຂອງ Apple Health ທີ່ hca.wa.gov/apple health-eligibility.

### ມາດຕະຖານລາຍຮັບ

| ຂະໜາດຄົວເຮືອນ | 1 | 2 | 3 | 4 | 5 |
|---|---|---|---|---|---|
| ລາຍຮັບປະຈໍາເດືອນ | $1,732 | $2,351 | $2,969 | $3,588 | $4,207 |
| **ຂະໜາດຄົວເຮືອນ** | **6** | **7** | **8** | **9** | **10** |
| ລາຍຮັບປະຈໍາເດືອນ | $4,825 | $5,444 | $6,063 | $6,682 | $7,300 |

*ອີງໃສ່ມາດຕະຖານໃນເດືອນເມສາຂອງສົກປີ 2024. ມາດຕະຖານອາດມີການປ່ຽນແປງໃນແຕ່ລະປີ.

### ຂ້າພະເຈົ້າຈະສາມາດສະໝັກໄດ້ໃນເມື່ອໃດ?

ທ່ານສາມາດເລີ່ມສະໝັກສໍາລັບການເພີ່ມຂະຫຍາຍ Apple Health ໃນລະດູໃບໄມ້ປົ່ງຂອງສົກປີ 2024.

### ການຄຸ້ມຄອງເລີ່ມຕົ້ນໃນເມື່ອໃດ?

ການຄຸ້ມຄອງການເພີ່ມຂະຫຍາຍ Apple Health ຈະເລີ່ມຕົ້ນໃນວັນທີ 1 ກໍລະກົດ 2024.

### ການຄຸ້ມຄອງສຸຂະພາບຫຍັງແມ່ນພ້ອມໃຫ້ບໍລິການກ່ອນວັນທີ 1 ກໍລະກົດ 2024?

**ການຄຸ້ມຄອງອື່ນໆຂອງ Apple Health**

ຖ້າທ່ານຈໍາເປັນຕ້ອງເຂົ້າພົບທ່ານໝໍໃນຕອນນີ້, ທ່ານສາມາດກວດເບິ່ງວ່າທ່ານເຂົ້າເກນສໍາລັບ Apple Health ສໍາລັບເດັກ, Apple Health ສໍາລັບຄົນຖືພາ, ການບໍລິການທາງການແພດສຸກເສີນສໍາລັບຄົນຕ່າງດ້າວ (AEM) ແລະ ການບໍລິການດູແລທາງການແພດ (MCS). ສໍາລັບຂໍ້ມູນເພີ່ມເຕີມ, ໃຫ້ເຂົ້າເບິ່ງ hca.wa.gov/apple-health-non-citizens.

**ຕົວເລືອກແຜນສຸຂະພາບທີ່ມີຄຸນສົມບັດ ແລະ Cascade Care Savings ສໍາລັບຜູ້ເຂົ້າເມືອງ**

ຕອນນີ້, ປະຊາຊົນທຸກຄົນໃນລັດວໍຊິງຕັນ, ບໍ່ວ່າຈະມີສະຖານະການເຂົ້າເມືອງແບບໃດກໍ່ຕາມ, ແມ່ນມີໂອກາດໃນການເລືອກຊື້ ແລະ ຊື້ແຜນປະກັນສຸຂະພາບ ແລະ ແຜນປະກັນແຂ້ວສໍາລັບປີ 2024. ຮຽນຮູ້ເພີ່ມເຕີມກ່ຽວກັບການດູແລເບິ່ງແຍງສຸຂະພາບຂອງຄົນເຂົ້າເມືອງ ແລະ ຕົວເລືອກອື່ນໆ ເພື່ອປະຢັດຄ່າໃຊ້ຈ່າຍ.

### ຂ້າພະເຈົ້າຈະສາມາດຮັບຂໍ້ມູນເພີ່ມເຕີມໄດ້ຢູ່ໃສ?

**ອອນລາຍ**: hca.wa.gov/ah-expansion **ອີເມວ**: ahexpansion@hca.wa.gov **ໂທລະສັບ**: 1-800-562-3022